*“ ໃນຖານະເປນບ່ອນບໍຣິການດ້ານບ່ອນຢູ່ອາສັຍຮັບໃຊ້ບກຄົນທີມີຄວາມເສັຽອົງຄະ,ພວກເຮົາຮູ້ຈັກວ່າຜູ້ອາສັຍຢູ່ບາງຄົນໄດ້ຕໍ່ສູ້ເພື່ອຈະອາສັຍຢູ່ ໂດຍບໍ່ຂື້ນນຳໃຜເມື່ອເວລາເຂົາເຈົ້າບໍ່ມີການເຂົ້າເຖິງການບໍຣິການແລະການອັນຊຸທີ່ເຫມາະສົມ.ຄົນບາງຄົນຈະເຂົ້າແລະອອກຈາກການປິ່ນປົວຢູ່ຕາມສະຖາບັນການປິ່ນປົວແລະບາງຄົນຈະກາຍເປັນບໍ່ມີເຮືອນຢູ່.*

*ໂດຍການເຮັດວຽກຮ່ວມກັນນຳກົນ **DSHS’s Aging and Long-Term Support Administration,** ບຸກຄົນທີ່ມີຄວາມ ເສັຽອົງຄະ ຈະສາມາດທີ່ຈະໄດ້ຮັບການບໍຣິການແລະການອູ້ມຊູ ຢູ່ໃນເຮືອນຊຶ່ງເຂົາ ເຈົ້າຕ້ອງການເພື່ອຈະດຳຣົງຊີວິດອັນເປັນຜົນປະໂຍດ,ເປັນພາກສ່ວນ ຂອງຄອບຄົວຂອງເຂົາເຈົ້າ,ເຂົ້າຮ່ວມໃນຊຸມນຸມຊົນຂອງເຂົາເຈົ້າແລະ ມີບ່ອນຢູ່ຂອງເຂົາເຈົ້າເອງເພື່ອຈະເອີ້ນວ່າແມ່ນບ້ານ.ພວກເຮົາແມ່ນ ອົງການທີ່ບໍ່ຫວັງຜົນກຳໄຣບ່ອນທຳອິດທີ່ໄດ້ເຮັດວຽກຮ່ວມກັນນຳ **Department of Commerce** ແລະ **ALTSA** ໃນໂຄງການ **811-PRA** ແລະດຳເນີນຕໍ່ໄປທີ່ຈະຊອກຫາຊ່ອງທາງໃຫມ່ເພື່ອຈະເຮັດວຽກ ຮ່ວມກັນໃນໂຄງການ **Rubik’s cube of housing** ອັນ, ການບໍຣິການແລະ ການອູ້ມຊູທີ່ຊ່ວຍເຫລືອເຮັດໃຫ້ບຸກຄົນແລະຊຸມນຸມຊົນ ຂອງເຂົາ ເຈົ້າທີ່ຈະປະສົບຄວາມສຳເຣັດ."*

*~ Max Benson and Ashley Martin,*
*Community Frameworks*

## ຖ້າຫາກວ່າທ່ານຮູ້ຈັກວ່າຄົນໃດຄົນນຶ່ງຢູ່ໃນຄວາມຕ້ອງການການອູ້ມຊູນຳການປິ່ນປົວຣະຍະຍາວ

www.washingtonconnection.org

ຈົດຊື່ເຂົ້ານຳ:

DSHS Region 1
(866) 323-9409

DSHS Region 2 South (King Co.)
(866) 323-9409

DSHS Region 2 North
(800) 780-7094

DSHS Region 3
(800) 786-3799

Washington State
Department of Social & Health Services
*Transforming lives*

DSHS 22-1762 LA (Rev. 3/21)

# ALTSA
# ແຫລ່ງຊ່ວຍເຫລືອດ້ານບ່ອນຢູ່ອາສັຍ



*ການອູ້ມຊູເພື່ອຈະຊ່ວຍໃຫ້ທ່ານດຳຣົງຊີວິດໄດ້ຢ່າງເປັນຜົນສຳເຣັດຢູ່ໃນ ເຮືອນຂອງທ່ານເອງ.*

Aging and Long-Term
Support Administration

## ການບໍລິການອູ້ມຊູ ຣະຍະເວລາເຊົ່າຢູ່

ALTSA ສະເນີໃຫ້ລູກຄ້າຢູ່ໃນເຮືອນຜູ້ທີ່ມີເງື່ອນໄຂໄດ້ຮັບການບໍລິການ ຫລາຍໆຢ່າງເພື່ອຈະອູ້ມຊູຈຸດມຸ່ງໝາຍຂອງການດຳຣົງຊີວິດ ໂດຍບໍ່ ອື້ມນຳໃຜຂອງເຂົາເຈົ້າ.ທາງເລືອກເອົາການບໍລິການສຳລັບບຸກຄົນທີ່ມີເງື່ອນໄຂໄດ້ຮັບແມ່ນ:

- ຜູ້ຈັດການເອກສານສຳລັບການບໍລິການແລະການອູ້ມຊູຣະຍະຍາວ.
- ການບໍລິການປິ່ນປົວສ່ວນຕົວເພື່ອຈະຊ່ວຍເຫລືອນຳກິຈກັມຂອງການ ດຳຣົງຊີວິດປະຈຳວັນ (ADLs) ແລະ ADLs ທີ່ເປັນປະໂຍດ,ເຊັ່ນວ່າ ການເຮັດວຽກບ້ານ.
- ການອູ້ມຊູສ່ວນບຸກຄົນເພື່ອຈະຊອກຫາແລະຮັກສາເອົາໄວ້ບ່ອນຢູ່ອາສັຍ ທີ່ບໍ່ອື້ມນຳໃຜ.
- ການບໍລິການປ່ຽນມາສູ່ຊຸມນຸມຊົນແລະການຮັກສາເອົາໄວ້,ເຊັ່ນວ່າ:
  - ການຊ່ວຍເຫລືອດ້ານການເງິນເພື່ອຈະຍ້າຍເຂົ້າເຮືອນ
  - ເຟີນີເຈີແລະເຄື່ອງໃຊ້ໃນເຮືອນ
  - ການຊ່ວຍເຫລືອທີ່ກ່ຽວພັນນຳການກຳຈັດມະແລງທຳລາຍ
  - ການຊ່ວຍເຫລືອທີ່ກ່ຽວພັນນຳການປະພຶດຢູ່ແບບຮົກເຮື້ອ
- ການອູ້ມຊູຣະຍະເວລາເຊົ່າຢູ່ທີ່ເຂັ້ມງວດຜ່ານການບໍລິການບ່ອນຢູ່ອາ ສັຍທີ່ຖືກອູ້ມຊູ






## Aging & Long-Term Support Administration (ALTSA) ແມ່ນຫຍັງ?

ພະແນກບໍລິຫານຢູ່ພາຍໃນກົມ DSHS ທີ່ຮັບຜິດຊອບສຳລັບການໂຄສະນາສົ່ງເສີມ,ການວາງແຜນແລະການໃຫ້ການບໍລິການປິ່ນປົວຣະຍະຍາວ ຊຶ່ງຕອບສະນອງຕໍ່ຄວາມຕ້ອງການຂອງບຸກຄົນຜູ້ທີ່ມີຄວາມເສັຽອົງຄະ ແລະຜູ້ໃຫຍ່ອາຍຸແກ່.

ບຸກຄົນສ່ວນຫລາຍຕ້ອງການຢາກຈະອາສັຍຢູ່ໂດຍບໍ່ອື້ມນຳໃຜເທົ່າທີ່ສາມາດເປັນໄປໄດ້ເປັນເວລານານເທົ່ານານທີ່ຈະເປັນໄປໄດ້. ALTSA ສະເນີທາງເລືອກຢູ່ໃນເຮືອນຫລາຍໆທາງໃຫ້ແກ່ບຸກຄົນບຸກຄົນ ທີ່ຕ້ອງມີການບໍລິການປິ່ນປົວຣະຍະຍາວຊຶ່ງຮັບຮູ້ທາງເລືອກເອົາຂອງ ລູກຄ້າ ແລະຄວາມຊອບໃຈໃນເຮືອນຢູ່ອາສັຍຂອງເຂົາເຈົ້າ.

ALTSA ອີງໃສ່ການປະສານງານຮ່ວມມືນຳທີ່ມີຄຸນຄ່າຂອງພວກເຮົາ ນຳເຈົ້າຂອງບ້ານທົ່ວຣັດວໍຊິງຕັນເພື່ອຈະເຕີບໂຕແລະຂະຫຍາຍທາງ ເລືອກເອົາບ່ອນຢູ່ອາສັຍທີ່ບໍ່ອື້ມນຳໃຜສຳລັບລູກຄ້າຂອງ ALTSA. ຖ້າຫາກວ່າທ່ານສົນໃຈໃນການປະສານງານຮ່ວມມືນຳພວກເຮົາ, ກະຣຸນາເບິ່ງແວບໄຊທ໌ແຫລ່ງຊ່ວຍເຫລືອໃນບ່ອນຢູ່ອາສັຍຂອງ ຜູ້ຖືສະ ໄດ້ຢູ່ທີ່: https://www.dshs.wa.gov/altsa/stakeholders/housing-resources

## ເງິນສົງເຄາະ ALTSA ແມ່ນຫຍັງ?

ເງິນສົງເຄາະຂອງ ALTSA ມີຈຸດປະສົງທີ່ຈະຊ່ວຍເຫລືອລູກຄ້າຂອງ ALTSA ໃນການປ່ຽນມາສູ່ບ່ອນຢູ່ອາສັຍທີ່ບໍ່ອື້ມນຳໃຜ.

ເງິນສົງເຄາະທີ່ໄດ້ຮັບທຶນມາຈາກຣັດຈະເອົາການຊ່ວຍເຫລືອຄ່າເຊົ່າເຮືອນໃຫ້ໃນອັດຕຣາຕາມທ້ອງຕະລາດໃນຂະນະທີ່ຊອກຫາເອົາ ເງິນສົງເຄາະຂອງຣັດຖະບານກາງຖາວອນ.

ຜູ້ກຳເງິນສົງເຄາະຈະຕ້ອງຮັບຜິດຊອບສຳລັບການຈ່າຍເງິນປະມານ 30% ຂອງຣາຍໄດ້ຂອງເຂົາເຈົ້າໄປໃສ່ຄ່າຂອງຄ່າເຊົ່າເຮືອນໂດຍກົງ ໄປຫາເຈົ້າຂອງບ້ານ,ແລະເງິນສົງເຄາະຈະກວມເອົາສ່ວນທີ່ເຫລືອ.

ສັນຍາຂອງ ALTSA ນຳ Spokane Housing Authority ແລະເພື່ອ ຈະບໍລິຫານເງິນສົງເຄາະທົ່ວຣັດ.

